**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-------===000===-------

# <u>ຄຳຮ້ອງທຸກ</u>

**ຮຽນ: ທ່ານທີ່ນັບຖື**

**ເລື່ອງ: ຂໍຄວາມຊ່ວຍເຫຼືອຕິດຕາມການດຳເນີນການສືບຂ່າວຊອກຫາຄົນຫາຍຂອງເຈົ້າໜ້າທີ່**

ຂ້າພະເຈົ້າ ນາງ ຊຸຍມິງ ອຶງ, ປັດຈຸບັນຢູ່ບ້ານ ໂຄກນິນ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ. ມີຈຸດປະສົງ ຂໍຮ້ອງທຸກ ມາຍັງທ່ານ ເລື່ອງ: ຂໍຄວາມຊ່ວຍເຫຼືອຕິດຕາມການດຳເນີນການສືບຂ່າວຊອກຫາການຫາຍຕົວຂອງສາມີ ຊື່ **ທ້າວ ສົມບັດ ສົມພອນ**, ອາຍຸ 60 ປີ, ອະດີດຜູ້ອຳນວຍການສູນອົບຮົມຮ່ວມພັດທະນາ ທັງເປັນນັກພັດທະນາດີເດັ່ນຄົນໜຶ່ງ ທີ່ຊຸກຍູ້ວຽກງານພັດທະນາແບບຍືນຍົງຢູ່ ສປປ.ລາວ ຈົນໄດ້ຮັບລາງວັນ ຣາມອນ ແມັກໄຊໄຊ ໃນປີ 2005 ແລະລາງວັນພັດທະນາບຸກຄະລາກອນທີ່ດີເດັ່ນ ປະຈຳປີ 2001 ຈາກອົງການສະຫະປະຊາຊາດ (United Nations-ESCAP) ແລະທ່ານຍັງໄດ້ຮັບໃບຍ້ອງຍໍ,ໃບກຽດຕິຄຸນຈາກພາກລັດອີກຫລາຍສະບັບ.

ອີງຕາມຄຳຊີ້ແຈງຂອງລັດຖະບານ ທີ່ໄດ້ຕີພິມໃນວັນທີ 20 ທັນວາ ທີ່ຜ່ານມາ ໄດ້ໃຫ້ຄວາມເຊື່ອໝັ້ນວ່າທາງລັດຖະບານຈະສືບສວນສອບສວນຢ່າງຈິງຈັງ ຕໍ່ກັບການຫາຍໂຕໄປຂອງ ທ່ານສົມບັດ ສົມພອນ, ຊຶ່ງອາດຖືກ “ລັກພາຕົວໄປ”. ແຕ່ເນື່ອງຈາກວ່າຕັ້ງແຕ່ມື້ດັ່ງກ່າວຈົນຮອດປະຈຸບັນຂ້າພະເຈົ້າແລະຄອບຄົວຍັງບໍ່ໄດ້ຮັບຂ່າວຄາວຄວາມຄືບໜ້າຂອງການສືບຫາສາມີຂອງຂ້າພະເຈົ້າແຕ່ຢ່າງໃດເລີຍ ດັ່ງນັ້ນຂ້າພເຈົ້າຈຶ່ງໄດ້ຂຽນ ຈົດໝາຍຮ້ອງທຸກສະບັບທີສອງນີ້ ແລະຮຽນມາຍັງທ່ານເພື່ອຊ່ວຍຊີ້ແຈງຂໍ້ມູນ ຫຼື ຜົນຂອງການສືບສວນຄົ້ນຫາຂອງສາມີຂ້າພະເຈົ້າທີ່ໄດ້ຫາຍໂຕໄປຕັ້ງແຕ່ວັນທີ 15 ມັງກອນ 2012.

ນັບຕັ້ງແຕ່ມື້ທຳອິດຈົນມາຮອດປະຈຸບັນຂ້າພະເຈົ້າໄດ້ໃຫ້ການຮ່ວມມືເປັນຢ່າງດີຕໍ່ກົມສືບສວນສອບສວນຄະດີອາຍານະຄອນຫຼວງວຽງຈັນ ກ່ຽວກັບຂໍ້ມູນຂອງຕົວຂ້າພະເຈົ້າເອງ ແລະ ຄອບຄົວຂອງສາມີຂ້າພະເຈົ້າ ລວມທັງປະຫວັດການເຮັດວຽກຂອງສາມີຂ້າພະເຈົ້າ. ແຕ່ປະຈຸບັນ ຂ້າພະເຈົ້າກໍຍັງບໍ່ໄດ້ຮັບຂໍ້ມູນໃດເລີຍ ຈາກພາກສ່ວນທີ່ກ່ຽວຂ້ອງ ເຊິ່ງເຮັດໃຫ້ຂ້າພະເຈົ້າ ແລະ ຄອບຄົວ ມີຄວາມກັງວົນຕໍ່ກັບສະຕາກຳຂອງສາມີຂ້າພະເຈົ້າຫຼາຍ.

ດັ່ງທີ່ຂ້າພະເຈົ້າໄດ້ເລົ່າເຫດການທີ່ປາກົດໃຫ້ເຫັນໃນແຟ້ມພາບກ້ອງວົງຈອນປິດທີ່ໄດ້ ໃນວັນທີ 17 ທັນວາ 2012 (ຄັດຕິດຄຳຮ້ອງທຸກສະບັບທີ 1). ສ່ວນຕົວຂອງຂ້າພະເຈົ້າເຫັນວ່າຂໍ້ມູນດັ່ງກ່າວມີຄວາມຊັດເຈນ

ພຽງພໍສາມາດໃຊ້ເປັນຈຸດເລີ່ມຕົ້ນທີ່ດີໃຫ້ແກ່ຕຳຫຼວດເພື່ອໃຊ້ເຂົ້າໃນການສືບຫາລົດຈິບ ແລະ ສາມີຂອງ ຂ້າພະເຈົ້າ ເຊັ່ນວ່າສາມາດໃຊ້ເພື່ອກວດກາເບິ່ງປ້າຍທະບຽນຂອງລົດກະບະຄັນດັ່ງກ່າວ, ສາມາດນຳໃຊ້ ເພື່ອເປັນຂໍ້ສັນນິຖານ ຫຼື ສອບຖາມບຸກຄົນຕ່າງໆທີ່ຢູ່ບໍລິເວນຈຸດທີ່ເກີດເຫດການໃນແລງມື້ນັ້ນ ແລະອີກ ຫລາຍປະເດັນທີ່ຜູ້ຊຳນານທາງສາມາດເຂົ້າໃຈໄດ້ໂດຍງ່າຍ.

ຂ້າພະເຈົ້າຮ້ອງຂໍມາຍັງທ່ານວ່າ ທ້າວ ສົມບັດ ສົມພອນ ກໍແມ່ນຄົນລາວຄົນໜຶ່ງ ທີ່ມີສິດທີ່ຈະ ຕ້ອງໄດ້ຮັບ ການປົກປ້ອງຈາກລັດຖະບານ ຕາມລັດຖະທຳມະນູນ ແລະ ກົດໝາຍ ສປປ ລາວ. ຖ້າຫາກ ວ່າ ທ້າວ ສົມບັດ ຫາກມີຄວາມຜິດໃດໆຕາມຂໍ້ກົດໝາຍແຫ່ງ ສປປ ລາວ ເພິ່ນກໍຄວນຖືກດຳເນີນການ ຕາມຂະບວນການຍຸດຕິທຳພາຍໃຕ້ກົດໝາຍ ແລະ ທ່ານຄວນໄດ້ຮັບການປົກປ້ອງ ຢ່າງເປັນທຳຕໍ່ໜ້າ ກົດໝາຍເຊັ່ນດຽວກັບປະຊາຊົນລາວທຸກຄົນ.

ອີກຢ່າງໜຶ່ງທີ່ຂ້າພະເຈົ້າມີຄວາມກັງວົນຄືສາມີຂອງຂ້າພະເຈົ້າມີໂລກປະຈຳໂຕ ແລະ ຈຳຕ້ອງໄດ້ ກິນຢາເປັນປະຈຳເພື່ອຮັກສາສຸຂະພາບ. ຖ້າຫາກສາມີຂ້າພະເຈົ້າ ບໍ່ໄດ້ກິນຢາເປັນປະຈຳ ຈະເຮັດ ໃຫ້ສຸຂະພາບຂອງສາມີຂ້າພະເຈົ້າ ຊຸດໂຊມຕື່ມ ເຖິງຂັ້ນຍາກທີ່ຈະປິ່ນປົວ.

ຕໍ່ກັບເຫດການທີ່ເກີດຂຶ້ນດັ່ງກ່າວ, ຂ້າພະເຈົ້າໃນນາມຂອງຜູ້ເປັນພັນລະຍາມີຄວາມກັງວົນແລະ ເປັນທຸກທີ່ສຸດຕໍ່ກັບການຫາຍຕົວຂອງສາມີ, ດັ່ງນັ້ນຈຶ່ງໄດ້ຂຽນໜັງສືຮ້ອງທຸກສະບັບທີສອງນີ້ຂຶ້ນມາຂໍຄວາມ ເຫັນອົກເຫັນໃຈຈາກທ່ານຊ່ວຍກະລຸນາ ໃຫ້ຂໍ້ມູນກ່ຽວກັບຄວາມຄືບໜ້າຂອງການສືບສວນສອບສວນ ຕໍ່ກັບ ການຫາຍໂຕໄປ ຂອງສາມີຂ້າພະເຈົ້າ. ແຕ່ຖ້າຫາກສາມີຂ້າພະເຈົ້າ ຫາກຖືກຄວບຄຸມຕົວໂດຍພາກລັດ, ກໍຂໍໃຫ້ຂ້າພະເຈົ້າ ແລະ ຄອບຄົວໄດ້ໃຊ້ສິດເຂົ້າພົບ ແລະຢ້ຽມຢາມຜູ້ກ່ຽວດ້ວຍ.

ຮຽນມາດ້ວຍຄວາມເຄົາລົບເປັນຢ່າງສູງ ແລະຫວັງວ່າທ່ານຈະຊ່ວຍພິຈາລະນາຕາມສົມຄວນດ້ວຍ.

ນະຄອນຫຼວງວຽງຈັນ, ວັນທີ 3 ມັງກອນ 2013<br>
ຜູ້ຮ້ອງຂໍ

ນາງ ຊຸຍມິງ ອຶງ<br>
ພັນລະຍາ ຂອງ ທ່ານ ສົມບັດ ສົມພອນ<br>
ໂທລະສັບ: 020 9552 0505<br>
ອີເມວ: shuimeng@gmail.com